

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Lao People's Democratic Republic

Peace Independence Democracy Unity Prosperity

ກະຊວງການເງິນ

Ministry of Finance

ບົດລາຍງານສະຖິຕິການເງິນແຫ່ງລັດ ປະຈຳ 9 ເດືອນ ປີ 2023

Government Finance Statistics

Nine-Month Report 2023

I. ສະພາບລວມການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໄລຍະ 09 ເດືອນ ປີ 2023

ບົດລາຍງານສະບັບນີ້ໄດ້ຮວບຮວມຂໍ້ມູນສະຖິຕິຂອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໄລຍະ 09 ເດືອນ ປີ 2023 ຕາມມາດຕະຖານສາກົນ GFS (ເຊິ່ງລາຍຮັບບໍ່ໄດ້ລວມເອົາລາຍຮັບຈາກການຂາຍຊັບສິນ ແລະ ລາຍຮັບເກັບຄືນເງິນກູ້ຢືມຕົ້ນທຶນປ່ອຍຕໍ່ ນັບຕັ້ງແຕ່ເດືອນມັງກອນ ເຖິງ ເດືອນກັນຍາ ປີ 2023) ແລະ ຍັງໄດ້ສົມທຽບກັບໄລຍະດຽວກັນຂອງປີຜ່ານມາ ເພື່ອຮັບຮູ້ເຖິງການປ່ຽນແປງຂອງການຈັດຕັ້ງປະຕິບັດ ງົບປະມານໃນໄລຍະຜ່ານມາ ແລະ ເພື່ອເປັນຂໍ້ມູນເບື້ອງຕົ້ນໃນການສຶກສາຄົ້ນຄວ້າຂັ້ນຕໍ່ໄປ.

ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 09 ເດືອນ ປີ 2023 ແມ່ນແນໃສ່ສູ້ຊົນການຈັດຕັ້ງປະຕິບັດໃຫ້ໄປຕາມຄາດໝາຍດ້ານລາຍຮັບ-ລາຍຈ່າຍງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງ ເພື່ອແນໃສ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານງົບປະມານ ໃຫ້ມີສະພາບຄ່ອງຂຶ້ນເທື່ອລະກ້າວ ໂດຍການເພີ່ມລາຍຮັບງົບປະມານ, ນຳໃຊ້ເຄື່ອງມືທັນສະໄໝ ແລະ ນຳໃຊ້ມາດຕະການຫຼຸດຜ່ອນລາຍຈ່າຍງົບປະມານທີ່ບໍ່ຈຳເປັນ. ເຊິ່ງສາມາດສັງລວມໂດຍສັງເຂບໄດ້ ດັ່ງນີ້:

1) ການປະຕິບັດນະໂຍບາຍ, ເຄື່ອງມື ແລະ ມາດຕະການ ດ້ານລາຍຮັບງົບປະມານ:

- ດ້ານການຮ່ວໄຫຼ ແລະ ການເກັບລາຍຮັບງົບປະມານ ຈາກການນຳເຂົ້າສິນຄ້າເຄື່ອງຂອງ;
- ສ້າງຖານລາຍຮັບໃໝ່ ຈາກການນຳໃຊ້ທ່າແຮງການຂົນສົ່ງສິນຄ້າຜ່ານທາງລົດໄຟລາວ-ຈີນ ເປັນຕົ້ນ ການເກັບຄ່າບໍລິການ ຕູ້ຄອນເທນເນີ;
- ດຳເນີນການຂະຫຍາຍຖານອາກອນມູນຄ່າເພີ່ມ (ອມພ) ແນ່ໃສ່ຊຸກຍູ້ຫົວໜ່ວຍທຸລະກິດທີ່ຍັງບໍ່ທັນເຂົ້າລະບົບອາກອນມູນຄ່າເພີ່ມ;
- ຂະຫຍາຍຖານລາຍຮັບ ອາກອນກຳໄລ, ຖານອາກອນລາຍໄດ້, ຖານອາກອນຊົມໃຊ້ (ອກຊ) ແລະ ຖານອາກອນຈຸນລະອິສາຫະກິດ;
- ການເກັບລາຍຮັບຈາກຖານໃໝ່ ໃນການຈັດຕັ້ງປະຕິບັດການເກັບລາຍຮັບແບບເດັດຖານຈາກການທົດລອງສົ່ງອອກແຮ່ທາດ ແລະ ການທົດລອງດຳເນີນທຸລະກິດ ກ່ຽວກັບ ຊັບສິນດິຈິຕອນ (ເງິນຄຣິບໂຕ);
- ນຳໃຊ້ເຄື່ອງມືທັນສະໄໝໃນການຄຸ້ມຄອງເກັບລາຍຮັບ ເປັນຕົ້ນ ນຳໃຊ້ລະບົບແຈ້ງພາສີແບບເອເລັກໂຕຣນິກ ASYCUDA ຢູ່ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ, ນຳໃຊ້ລະບົບຄຸ້ມຄອງອາກອນແບບທັນສະໄໝ TaxRIS, ນຳໃຊ້ລະບົບໂປຣແກຣມບັນຊີ (APIS, Bansi.la).

2) ການປະຕິບັດນະໂຍບາຍ, ເຄື່ອງມື ແລະ ມາດຕະການ ດ້ານລາຍຈ່າຍງົບປະມານ:

- ຈັດຕັ້ງປະຕິບັດມາດຕະການປະຢັດ ແລະ ດ້ານການຟຸມເຟືອຍ ຕາມດຳລັດ ສະບັບເລກທີ 205/ນຍ, ລົງວັນທີ 22 ກໍລະກົດ 2022 ແລະ ຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດ ແລະ ດ້ານການຟຸມເຟືອຍ ສະບັບເລກທີ 0200/ກງ, ລົງວັນທີ 25 ມັງກອນ 2023 ໃຫ້ເປັນຮູບປະທຳ ແລະ ມີລັກສະນະວິທະຍາສາດ ເພື່ອຮັບປະກັນລາຍຈ່າຍທີ່ເປັນບຸລິມະສິດ ແລະ ຈຳເປັນ ພ້ອມທັງເຂັ້ມງວດການກວດກາເອກະສານກ່ອນການເບີກຈ່າຍງົບປະມານ ເພື່ອໃຫ້ບັນດາຫົວໜ່ວຍງົບປະມານທີ່ກ່ຽວຂ້ອງ ນຳໃຊ້ງົບປະມານໃຫ້ຖືກເປົ້າໝາຍ ແລະ ມີປະສິດທິພາບ;
- ຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017; ແນ່ໃສ່ຮັບປະກັນ ການນຳໃຊ້ງົບປະມານການລົງທຶນຂອງລັດໃຫ້ມີປະສິດທິພາບ, ປະສິດຖິຜົນສູງ, ປະຢັດ, ຍຸດຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້ ເພື່ອຈຸດປະສົງການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;

- ຖືເອົາການປະຕິບັດລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນ, ເງິນນະໂຍບາຍ ແລະ ຊ່ວຍໜູນຕ່າງໆ ເປັນບູລິມະສິດ ໂດຍໃຫ້ຂະແໜງການສູນກາງ ແລະ ທ້ອງຖິ່ນ ຈັດສັນໃຫ້ພຽງພໍ ເພື່ອຮັບປະກັນການຈັດຕັ້ງປະຕິບັດລາຍຈ່າຍ ເງິນເດືອນພະນັກງານ-ລັດຖະກອນ ໃຫ້ເປັນປົກກະຕິ;
- ປະເມີນການຈັດຕັ້ງປະຕິບັດ ການທົດລອງຫົວໜ່ວຍງົບປະມານກຸ້ມຕົນເອງທາງດ້ານງົບປະມານ ເພື່ອຫັນໄປສູ່ ການກຸ້ມຕົນເອງເທື່ອລະກ້າວ.

II. ສະຫຼຸບຫຍໍ້ການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ 09 ເດືອນ (ມັງກອນ - ກັນຍາ ປີ 2023):

1. ແຜນງົບປະມານແຫ່ງລັດ ປີ 2023:

- ແຜນລາຍຮັບທັງໝົດ: 37.823 ຕື້ກີບ (ບໍ່ລວມແຜນລາຍຮັບຈາກການຂາຍຊັບສິນ ແລະ ເກັບຄືນຕົ້ນທຶນເງິນກູ້ຢືມຕໍ່), ໃນນັ້ນ:
  - + ລາຍຮັບພາຍໃນ 34.273 ຕື້ກີບ;
  - + ລາຍຮັບການຊ່ວຍເຫຼືອລ້າ 3.550 ຕື້ກີບ;
- ແຜນລາຍຈ່າຍທັງໝົດ: 43.498 ຕື້ກີບ; ໃນນັ້ນ:
  - + ແຜນລາຍຈ່າຍບໍລິຫານປົກກະຕິ 29.030 ຕື້ກີບ;
  - + ແຜນລາຍຈ່າຍລົງທຶນ 14.468 ຕື້ກີບ
- ແຜນຂາດດຸນ: 5.675 ຕື້ກີບ, ເທົ່າກັບ 2,4% ຂອງ GDP (ມູນຄ່າ GDP ເທົ່າກັບ 234.160 ຕື້ກີບ).

2. ຜົນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 09 ເດືອນຕົ້ນ ປີ 2023:

- **<u>ດ້ານລາຍຮັບ:</u>**

ການເກັບລາຍຮັບງົບປະມານ ໃນໄລຍະ 9 ເດືອນຕົ້ນປີ 2023 ທັງໝົດບັນລຸໄດ້ 29.448 ຕື້ກີບ, ເທົ່າກັບ 77,9% ຂອງແຜນການປະຈຳປີ ແລະ ເພີ່ມຂຶ້ນ 32,1% ທຽບກັບໄລຍະດຽວກັນຂອງປີຜ່ານມາ. ໃນນີ້:

- **ລາຍຮັບຈາກພາສີ-ອາກອນ**: ປະຕິບັດໄດ້ 23.989 ຕື້ກີບ, ເທົ່າກັບ 81,5% ຂອງແຜນການ ແລະ ທຽບໃສ່ໄລຍະ ດຽວກັນຂອງປີຜ່ານມາ (ມັງກອນ - ກັນຍາ ປີ 2022 ປະຕິບັດໄດ້ 17.660 ຕື້ກີບ) ເພີ່ມຂຶ້ນ 35,8%; ເຊິ່ງໃນນັ້ນ ປະກອບມີ:
  - ອາກອນກຳໄລ ປະຕິບັດໄດ້ 3.386 ຕື້ກີບ, ເທົ່າກັບ 60,83% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນ ຂອງປີຜ່ານມາ ເພີ່ມຂຶ້ນ 9,97%;
  - ອາກອນລາຍໄດ້ ປະຕິບັດໄດ້ 2.463 ຕື້ກີບ, ເທົ່າກັບ 87,56% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນ ຂອງປີຜ່ານມາ ເພີ່ມຂຶ້ນ 22,79%;
  - ອາກອນມູນລະຄ່າເພີ່ມ (VAT) ປະຕິບັດໄດ້ 5.788 ຕື້ກີບ, ເທົ່າກັບ 83,91% ຂອງແຜນການ ແລະ ທຽບໃສ່ ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 37,74%;
  - ອາກອນຊົມໃຊ້ ປະຕິບັດໄດ້ 5.083 ຕື້ກີບ, ເທົ່າກັບ 82,11% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນ ຂອງປີຜ່ານມາ ເພີ່ມຂຶ້ນ 23,03%;
  - ພາສີຂາເຂົ້າ ປະຕິບັດໄດ້ 2.025 ຕື້ກີບ, ເທົ່າກັບ 90,33% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນຂອງ ປີຜ່ານມາ ເພີ່ມຂຶ້ນ 33,66%;
  - ຄ່າຊັບພະຍາກອນທຳມະຊາດ ປະຕິບັດໄດ້ 2.517 ຕື້ກີບ, ເທົ່າກັບ 110,73% ຂອງແຜນການ ແລະ ທຽບໃສ່ ໄລຍະດຽວກັນ ເພີ່ມຂຶ້ນ 112%;
  - ຄ່າພາກຫຼວງໄຟຟ້າ ປະຕິບັດໄດ້ 647 ຕື້ກີບ, ເທົ່າກັບ 54,47% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນ ປີຜ່ານມາ ເພີ່ມຂຶ້ນ 100,44%;

- **ລາຍຮັບທີ່ບໍ່ແມ່ນພາສີ ແລະ ອາກອນ:** ປະຕິບັດໄດ້ ແມ່ນ 4.244 ຕື້ກີບ, ເທົ່າກັບ 87,55%. ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 37,27%. ໃນນັ້ນ ລາຍຮັບປະເພດທີ່ບໍ່ແມ່ນອາກອນ-ພາສີ ທີ່ກວມສັດສ່ວນຫຼາຍ ດັ່ງນີ້:
  - ຄ່າເຊົ່າຊັບສິນຂອງລັດ ປະຕິບັດໄດ້ 155 ຕື້ກີບ, ເທົ່າກັບ 322,33% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 50,02%;
  - ຄ່າສໍາປະທານ ປະຕິບັດໄດ້ 884 ຕື້ກີບ, ເທົ່າກັບ 451,36% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 60,34%;
  - ລາຍຮັບວິຊາການ ປະຕິບັດໄດ້ 839 ຕື້ກີບ, ເທົ່າກັບ 71,87% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 29,52%;
  - ລາຍຮັບຈາກເງິນປັນຜົນລັດວິສາຫະກິດ ປະຕິບັດໄດ້ 765 ຕື້ກີບ, ເທົ່າກັບ 86,53% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 16,01%;
  - ລາຍຮັບຈາກດອກເບ້ຍເງິນກູ້ຢືມປ່ອຍຕໍ່ໃຫ້ລັດວິສາຫະກິດ ປະຕິບັດໄດ້ 214 ຕື້ກີບ, ເທົ່າກັບ 27,39% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ຫຼຸດລົງ 26.38%;
  - ຄ່າບິນຜ່ານ ປະຕິບັດໄດ້ 590 ຕື້ກີບ, ເທົ່າກັບ 69% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 169,01% ;
  - **ລາຍຮັບຈາກການຊ່ວຍເຫຼືອລ້າ**: ປະຕິບັດໄດ້ 1,215 ຕື້ກີບ, ເທົ່າກັບ 34,2% ຂອງແຜນການ ປີ 2023 ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ຫຼຸດລົງ 21,37%;

- <u>ດ້ານລາຍຈ່າຍ:</u>

ການຈັດຕັ້ງປະຕິບັດລາຍຈ່າຍ ທັງໝົດ 9 ເດືອນຕົ້ນປີ ປະຕິບັດໄດ້ 26.785 ຕື້ກີບ ເທົ່າກັບ 61,6% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນ ປີຜ່ານມາ ເພີ່ມຂຶ້ນ 29,4%, ໃນນັ້ນ:

  - **ລາຍຈ່າຍບໍລິຫານປົກກະຕິ** ປະຕິບັດໄດ້ 19.060 ຕື້ກີບ ທຽບໃສ່ແຜນ 65,7%, ເຊິ່ງໃນນັ້ນ ລາຍຈ່າຍພາກເງິນເດືອນ ແລະ ເງິນອຸດໜູນພະນັກງານ ປະຕິບັດໄດ້ 9.949 ຕື້ກີບ ທຽບໃສ່ແຜນໄດ້ 74.8%; ລາຍຈ່າຍເງິນຊ່ວຍໜູນ, ເງິນນະໂຍບາຍ, ເງິນດັດສົມ ຕ່າງໆ ປະຕິບັດໄດ້ 3.094 ຕື້ກີບ ທຽບໃສ່ແຜນ 71,1%, ລາຍຈ່າຍດອກເບ້ຍ ແມ່ນ 3.104 ຕື້ກີບ (ດອກເບ້ຍຕ່າງປະເທດ 2.369 ຕື້ກີບ ແລະ ດອກເບ້ຍພາຍໃນ 735 ຕື້ກີບ) ທຽບໃສ່ແຜນໄດ້ 41,5%.
  - **ລາຍຈ່າຍຈາກການລົງທຶນ** ປະຕິບັດໄດ້ 7.725 ຕື້ກີບ, ເທົ່າກັບ 53,4% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 35,9%.

- <u>ດຸນງົບປະມານ:</u>

ການຈັດຕັ້ງປະຕິບັດແຜນງົບປະມານໃນໄລຍະ 9 ເດືອນ ເຫັນວ່າລາຍຮັບ ສູງກວ່າລາຍຈ່າຍ ຈຶ່ງເຮັດໃຫ້ງົບປະມານ ເກີນດຸນ ຈໍານວນ 2.663 ຕື້ກີບ.

ຕາຕະລາງ 1: ການຈັດຕັ້ງປະຕິບັດລາຍຮັບພາຍໃນ ໄລຍະ 09 ເດືອນ ປີ 2023 ທຽບກັບໄລຍະດຽວກັນ


(ຫົວໜ່ວຍ ຕື້ກີບ)

	ເນື້ອໃນ	09 ເດືອນ	09 ເດືອນ	09 ເດືອນ	09 ເດືອນ	09 ເດືອນ	% ທຽບ ປີ	% ທຽບ ແຜນ 2023
ລ/ດ		2019	2020	2021	2022	2023	2022	
I	**ລາຍຮັບຈາກພາສີ-ອາກອນ**	**13.000**	**11.426**	**12.531**	**17.660**	**23.989**	**35.84%**	**81.52%**
1	ອາກອນກຳໄລ	1.293	1.169	1.871	3.079	3.386	9.97%	60.83%
2	ອາກອນລາຍໄດ້	1.200	1.042	1.019	2.006	2.463	22.79%	87.56%
3	ພາສີທີ່ດິນ	148	164	88	122	147	20.37%	72.36%
4	ອາກອນມູນຄ່າເພີ່ມ	4.369	3.274	3.781	4.202	5.788	37.74%	83.91%
5	ອາກອນຊົມໃຊ້	3.713	2.772	3.370	4.131	5.083	23.03%	82.11%
6	ພາສີຂາເຂົ້າ	768	796	598	1.515	2.025	33.66%	90.33%
7	ພາສີຂາອອກ	32	11	13	148	74	-49.65%	10.71%
8	ຄ່າທຳນຽມຈົດທະບຽນ	8	30	31	20	65	229.05%	72.56%
9	ຄ່າທຳນຽມຕ່າງໆ	649	1.476	1.036	924	1.790	93.70%	142.64%
10	ຄ່າຊຸ້ບພະຍາກອນທຳມະຊາດ	476	387	524	1.187	2.517	112.00%	110.37%
11	ຄ່າພາກຫຼວງຈາກໄມ້	9	35	13	3	5	52.17%	65.64%
12	ຄ່າພາກຫຼວງຈາກໄຟຟ້າ	334	270	187	323	647	100.44%	54.47%
II	**ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ**	**2.625**	**2.054**	**2.258**	**3.091**	**4.244**	**37.27%**	**87.55%**
1	ລາຍຮັບຈາກຄ່າເຊົ່າ	27	32	26	104	155	50.02%	322.33%
2	ຄ່າສຳປະທານ	63	57	46	551	884	60.34%	451.36%
3	ຄ່າປັບໃໝ	19	30	15	20	264	1228.97%	381.98%
4	ລາຍຮັບບໍລິຫານວິຊາການ	387	447	684	648	839	29.52%	71.87%
5	ເງິນປັນຜົນ	847	451	492	659	765	16.01%	86.53%
6	ດອກເບ້ຍເງິນກູ້	557	151	124	291	214	-26.38%	27.39%
7	ຄ່າບິນຜ່ານ	653	376	170	219	590	169.01%	69.00%
8	ກອງທຶນ	18	349	625	459	418	-8.98%	55.97%
9	ລາຍຮັບອື່ນໆ	53	132	76	141	115	-18.71%	113.55%
III	**ລວມລາຍຮັບພາຍໃນ**	**15.625**	**13.480**	**14.789**	**20.751**	**28.232**	**36.05%**	**82.38%**

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ, ກະຊວງການເງິນ

ເສັ້ນສະແດງ: ລາຍຮັບຈາກການຊ່ວຍເຫຼືອລ້າ 09 ເດືອນຕົ້ນ ປີ 2023 ທຽບໃສ່ໄລຍະດຽວກັນຜ່ານມາ

(ຫົວໜ່ວຍ ຕື້ກີບ)



ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ, ກະຊວງການເງິນ

ຕາຕະລາງ 2 : ການຈັດຕັ້ງປະຕິບັດລາຍຈ່າຍທັງໝົດ 09 ເດືອນຕົ້ນ ປີ 2023 ທຽບກັບໄລຍະດຽວກັນ

(ຫົວໜ່ວຍ ຕື້ກີບ)

ລ/ດ	ເນື້ອໃນ	09 ເດືອນ 2019	09 ເດືອນ 2020	09 ເດືອນ 2021	09 ເດືອນ 2022	09 ເດືອນ 2023	% ທຽບ ປີ 2022	% ທຽບແຜນ 2023
1	**ເງິນເດືອນ ແລະ ເງິນອຸດໜູນ**	**7.786**	**7.923**	**8.133**	**8.902**	**9.949**	**11.76%**	**74.81%**
	- ເງິນເດືອນພື້ນຖານ	6.467	6.590	6.624	7.302	7.887	8.01%	75.11%
	- ເງິນອຸດໜູນ	1.319	1.333	1.509	1.600	2.062	28.88%	73.65%
2	**ລາຍຈ່າຍດັດສົມສິ່ງເສີມ**	**1.876**	**2.006**	**1.833**	**1.712**	**3.094**	**80.66%**	**71.12%**
	-ນະໂຍບາຍ ແລະ ຊ່ວຍໜູນ ອື່ນໆ	1.071	1.104	1.203	0.921	1.489	61.76%	74.46%
	- ດັດສົມທົ່ວໄປ	762	865	582	759	1.524	100.81%	68.32%
	- ປະກອບສ່ວນອົງການຈັດຕັ້ງ	43	38	47	33	81	144.20%	67.45%
3	**ບໍລິຫານ ແລະ ຊື້ໃໝ່**	**1.655**	**1.442**	**1.068**	**1.762**	**2.011**	**14.15%**	**63.84%**
4	**ສິ່ງຄືນເງິນ VAT**	**-**	**-**	**17**	**4**	**36**	**825.58%**	**24.00%**
5	**ຊຳລະດອກເບ້ຍ**	**2.142**	**1.639**	**1.356**	**2.380**	**3.104**	**30.41%**	**41.50%**
	- ຕ່າງປະເທດ	1.798	1.401	1.053	1.679	2.369	41.05%	40.78%
	- ພາຍໃນ	345	238	303	701	735	4.91%	43.99%
6	**ລາຍຈ່າຍອື່ນໆ**	**88**	**64**	**144**	**246**	**375**	**52.05%**	**55.04%**
	ເງິນແຮລັດຖະບານ	43	64	84	96	103	6.55%	68.49%
	ຄັງສະສົມແຫ່ງລັດ	45	-	60	150	200	33.33%	50.00%
	ໄພພິບັດ	-	-	-	-	72		143.88%
	ບຳເນັດເກີນແຜນ	-	-	178	-	491		0.00%
I	**ລາຍຈ່າຍບໍລິຫານປົກກະຕິ**	**13.547**	**13.074**	**12.551**	**15.007**	**19.059**	**23.73%**	**65.65%**
II	**ລາຍຈ່າຍລົງທຶນຂອງລັດ**	**6.225**	**6.255**	**4.223**	**5.685**	**7.725**	**35.89%**	**53.40%**
1	**- ລົງທຶນພາຍໃນ**	**2.311**	**1.892**	**1.379**	**2.119**	**2.282**	**7.68%**	**52.85%**
2	**- ລົງທຶນຕ່າງປະເທດ**	**3.914**	**4.362**	**2.845**	**3.566**	**5.443**	**52.66%**	**53.63%**
	+ ກູ້ຢືມເປັນໂຄງການ	2.341	2.819	1.535	2.020	4.228	109.28%	64.06%
	+ ຊ່ວຍເຫຼືອລ້າເປັນໂຄງການ	479	483	487	433	670	54.71%	63.70%
	+ ຊ່ວຍເຫຼືອລ້າບໍ່ເປັນໂຄງການ	1.093	1.060	823	1.112	545	-50.99%	21.82%
III	**ລວມລາຍຈ່າຍທັງໝົດ (I+II)**	**19.772**	**19.328**	**16.775**	**20.692**	**26.785**	**29.44%**	**61.58%**

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ, ກະຊວງການເງິນ